# ໂຄງການ ການປັບປຸງການຄຸ້ມຄອງທີ່ດິນ ໃນຂົງເຂດແມ່ນ້ຳຂອງ 2 (ILM-MR 2)

### ການຮັບປະກັນສິດນຳໃຊ້ທີ່ດິນ ສຳລັບຊາວກະສິກອນຂະໜາດນ້ອຍໃນຂົງເຂດແມ່ນ້ຳຂອງ

## ຄວາມເປັນມາ

ການປ່ຽນແປງທາງດ້ານ ເສດຖະກິດ-ສັງຄົມ ຢ່າງໄວວາໃນພາກພື້ນແມ່ນ້ຳຂອງ ໃນປະເທດ ກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມ (CLMV) ໄດ້ເພີ່ມຄວາມຕ້ອງການ ໃນການນຳໃຊ້ທີ່ດິນສຳລັບ ການສ້າງພື້ນຖານໂຄງລ່າງ, ທຸລະກິດດ້ານກະສິກຳ ແລະ ເພື່ອຈຸດປະສົງການພັດທະນາອື່ນໆ. ໃນທົ່ວພາກພື້ນ, ຊີວິດການເປັນຢູ່ຂອງຊາວກະສິກອນຂະໜາດນ້ອຍຈຳນວນຫຼວງຫຼາຍໄດ້ຮັບຜົນກະທົບຈາກການລົງທຶນ ທີ່ເຮັດໃຫ້ການເຂົ້າເຖິງທີ່ດິນ ແລະ ຊັບພະຍາກອນທຳມະຊາດອື່ນໆ ທີ່ເຂົາເຈົ້າເພິ່ງພາອາໄສ ຫຼຸດລົງໂດຍບໍ່ມີການສະເໜີທາງເລືອກທົດແທນທີ່ເໝາະສົມໃຫ້ແກ່ເຂົາເຈົ້າ.

ການເວນຄືນທີ່ດິນ ກຳລັງກາຍເປັນຕົວຂັບເຄື່ອນທີ່ສຳຄັນ ຂອງຄວາມທຸກຍາກ ແລະ ຄວາມບໍ່ໝັ້ນຄົງທາງດ້ານສະບຽງອາຫານ ຍ້ອນການສຳປະທານຂະໜາດໃຫຍ່ໄດ້ເຮັດໃຫ້ພື້ນທີ່ດິນກະສິກຳສຳລັບຄອບຄົວຫຼຸດລົງ ລວມໄປເຖິງການເຂົ້າເຖິງປ່າໄມ້ຂອງຊຸມຊົນ. ຜົນກະທົບດັ່ງກ່າວສ່ວນໃຫຍ່ແມ່ນສົ່ງຜົນກະທົບຕໍ່ ຊາວກະສິກອນ ໃນເຂດຊົນນະບົດ ທີ່ບໍ່ມີເອກະສານສິດກ່ຽວກັບການຄອບຄອງ ແລະ ການນຳໃຊ້ທີ່ດິນຕາມປະເພນີຂອງເຂົາເຈົ້າ. ລັດຖະບານໄດ້ມີການພັດທະນານະໂຍບາຍຕ່າງໆ ເພື່ອການຄຸ້ມຄອງການລົງທຶນທີ່ກ່ຽວຂ້ອງກັບການເວນຄືນທີ່ດິນ, ການທົດແທນຄືນ, ການໃຫ້ສຳປະທານ ແລະ ສຳລັບການແກ້ໄຂຂໍ້ຂັດແຍ່ງ.

ການຈັດຕັ້ງປະຕິບັດນະໂຍບາຍເຫຼົ່ານັ້ນເປັນສິ່ງທ້າທາຍ ແລະ ມີປະສົບການທັງດ້ານບວກ ແລະ ດ້ານລົບ ທີ່ສາມາດຖອດຖອນໄດ້ຈາກຫຼາຍປະເທດ ເພື່ອຊ່ວຍໃຫ້ຜູ້ທີ່ຕັດສິນໃຈດ້ານນະໂຍບາຍ ສາມາດຕອບສະໜອງ ຕໍ່ກັບບັນດາສິ່ງທ້າທາຍເຫຼົ່ານັ້ນ. ບັນດາສິ່ງທ້າທາຍ ແລະ ກາລະໂອກາດ ທີ່ກຳລັງສົ່ງຜົນກະທົບ ຕໍ່ກັບຄວາມໝັ້ນຄົງ ໃນການຄອບຄອງນຳໃຊ້ທີ່ດິນ ຂອງຊາວກະສິກອນຂະໜາດນ້ອຍ ແລະ ໂດຍສະເພາະປະຊາຊົນບັນດາເຜົ່າແມ່ນໄດ້ຮັບການແກ້ໄຂໂດຍ ໂຄງການປັບປຸງການຄຸ້ມຄອງທີ່ດິນໃນຂົງເຂດແມ່ນ້ຳຂອງ




| | |
|---|---|
| **ຊື່ໂຄງການ** | ໂຄງການການປັບປຸງການຄຸ້ມຄອງທີ່ດິນ ໃນຂົງເຂດແມ່ນ້ຳຂອງ (ILM-MR) |
| **ໃຫ້ທຶນໂດຍ** | ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ ແຫ່ງ ສະຫະພັນເຢຍລະມັນ (BMZ) |
| **ເຂດເປົ້າໝາຍຂອງໂຄງການ** | ກຳປູເຈຍ, ສປປ ລາວ, ມຽນມາ ແລະ ຫວຽດນາມ (CLMV) |
| **ໄລຍະເວລາໂຄງການ** | 2015 - 2022 |

## ຈຸດປະສົງ

ກຸ່ມຊາວກະສິກອນຂະໜາດນ້ອຍມີການເຂົ້າເຖິງ ແລະ ຄວບຄຸມທີ່ດິນກະສິກຳ ແລະ ປ່າໄມ້ ໄດ້ຢ່າງມີຄວາມໝັ້ນຄົງ ແລະ ສະເໝີພາບໃນເຂດພາກພື້ນແມ່ນ້ຳຂອງ.

## ວິທີດຳເນີນວຽກງານ

ໂຄງການດັ່ງກ່າວນີ້ ແມ່ນການປະກອບສ່ວນເຂົ້າໃນ ໂຄງການບໍລິຫານລັດກ່ຽວກັບທີ່ດິນປະຈຳພາກພື້ນແມ່ນ້ຳຂອງ (MRLG). ໂຄງການ MRLG ແມ່ນໄດ້ຮັບທຶນຮ່ວມສະໜັບສະໜູນຈາກ ລັດຖະບານສະວິດເຊີແລນ ໂດຍຜ່ານອົງການເພື່ອການພັດທະນາ ແລະ ການຮ່ວມມືຂອງປະເທດສະວິດ (SDC) ແລະ ໄດ້ຮັບທຶນຮ່ວມເພີ່ມຕື່ມຈາກລັດຖະບານຂອງປະເທດ ລຸກຊຳບວກ ແລະ ເຢຍລະມັນ. ເປົ້າໝາຍຂອງໂຄງການແມ່ນ "ກຸ່ມຊາວກະສິກອນຂະໜາດນ້ອຍມີການເຂົ້າເຖິງ ແລະ ຄວບຄຸມທີ່ດິນກະສິກຳ ແລະ ປ່າໄມ້ໄດ້ຢ່າງມີຄວາມໝັ້ນຄົງ ແລະ ສະເໝີພາບໃນເຂດພາກພື້ນແມ່ນ້ຳຂອງ".

ໂຄງການ MRLG ມີເປົ້າໝາຍໃນການປະກອບສ່ວນເຂົ້າໃນການປັບປຸງບັນດານະໂຍບາຍ ແລະ ພາກປະຕິບັດ ທີ່ກ່ຽວຂ້ອງກັບຄວາມໝັ້ນຄົງໃນການຄອບຄອງນຳໃຊ້ທີ່ດິນສຳລັບຄອບຄົວຊາວກະສິກອນ. ບັນດາຄຳແນະນຳຕໍ່ກັບນະໂຍບາຍເຫຼົ່ານີ້ແມ່ນຈະໄດ້ຮັບການພັດທະນາຂຶ້ນໂດຍ ກຸ່ມພັນທະມິດຂອງພາກສ່ວນທີ່ດຳເນີນການປະຕິຮູບ ຫຼື Reform Actors (ກຸ່ມບັນດາພາກສ່ວນທີ່ມີສ່ວນຮ່ວມທີ່ສຳຄັນ) ໃນແຕ່ລະປະເທດ ແລະ ພາກພື້ນ.

ບັນດາກຸ່ມພັນທະມິດເຫຼົ່ານີ້ ແມ່ນປະຕິບັດຕາມສາຍວຽກ ຢູ່ລະດັບພາກພື້ນ

*ການນຳສະເໜີຜົນໄດ້ຮັບຂອງການຝຶກອົບຮົມກ່ຽວກັບສິດໃນການຄອບຄອງທີ່ດິນຕາມປະເພນີຢູ່ແຂວງຊຽງຂວາງ. ນຳສະເໜີໂດຍທ່ານ ບຸນຍາເດດ ພວງມາລາ ຕາງໜ້າຈາກໂຄງການ RECOFTC - ສູນຊັບພະຍາກອນມະນຸດ ແລະ ປ່າໄມ້ລາວ.*
*ຮູບໂດຍ: © GIZ/ບາດ ເວີເວຈ໌*

1. ການຮັບຮູ້ສິດຕາມປະເພນີ
2. ການລົງທຶນດ້ານກະສິກຳຢ່າງມີຄວາມຮັບຜິດຊອບ

ສ່ວນຫຼາຍແລ້ວ, ການປະກອບສ່ວນຕໍ່ນະໂຍບາຍຈະເລັງໃສ່ ການປັບປຸງດ້ານກົດໝາຍ, ດຳລັດການຈັດຕັ້ງປະຕິບັດ ແລະ ກົນໄກລະບຽບການຕ່າງໆ. ໃນກໍລະນີທີ່ມີການບໍ່ເຊື່ອມໂຍງກັນລະຫວ່າງນະໂຍບາຍ ແລະ ຈັດຕັ້ງປະຕິບັດຕົວຈິງຢ່າງມີປະສິດທິພາບໃນພາກສະໜາມ, ການປະກອບສ່ວນຈະແນໃສ່ການປັບປຸງການຈັດຕັ້ງປະຕິບັດນະໂຍບາຍ ຢ່າງມີປະສິດທິພາບຢູ່ໃນລະດັບການປົກຄອງຂັ້ນທ້ອງຖິ່ນ ແລະ ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນເພື່ອໃຫ້ເຂົາເຈົ້າຮັບຮູ້ ແລະ ສາມາດປົກປ້ອງສິດຂອງເຂົາເຈົ້າ. ນອກຈາກນີ້, ການປູກຈິດສຳນຶກດ້ານສິດກ່ຽວກັບທີ່ດິນ ແລະ ການຫັນປ່ຽນຂໍ້ຂັດແຍ່ງ ຖືເປັນອົງປະກອບໂດຍລວມຂອງທຸກຂົງເຂດວຽກງານ.

## ສິ່ງທີ່ພວກເຮົາບັນລຸ

ຊ່ວງໄລຍະທີ່ສອງຂອງໂຄງການ ແມ່ນໄດ້ເລີ່ມໃນເດືອນ ເມສາ 2019 ແລະ ໄດ້ສ້າງຂຶ້ນ ບົນພື້ນຖານຜົນສຳເລັດ ຂອງຊ່ວງໄລຍະທຳອິດ ຂອງໂຄງການ. ຊ່ວງປີທຳອິດຂອງໂຄງການ MRLG-2 ໄດ້ໃຊ້ໄປກັບການກະກຽມແຜນງານ ແລະ ຈັດຕັ້ງ 10 ກຸ່ມພັນທະມິດທີ່ກ່ຽວຂ້ອງໃນ 4 ປະເທດ ກຳປູເຈຍ, ລາວ, ມຽນມາ ແລະ ຫວຽດນາມ (ກຸ່ມປະເທດ CLMV).

ການຈັດຕັ້ງປະຕິບັດກິດຈະກຳໂຄງການໂດຍລວມແມ່ນຍັງເປັນໄປຕາມ ແຜນທີ່ກຳນົດໄວ້ ແລະ 8 ໃນ 10 ກຸ່ມແມ່ນໄດ້ຍື່ນ “ແຜນວຽກຍຸດທະສາດ” (SWP) ຂອງເຂົາເຈົ້າເປັນທີ່ຮຽບຮ້ອຍແລ້ວ ແລະ ກໍໄດ້ຮັບການຮັບຮອງຈາກຄະນະຊີ້ນຳໂຄງການ ໝາຍຄວາມວ່າການເຮັດສັນຍາ ແລະ ການຈັດຕັ້ງປະຕິບັດວຽກພາກສະໜາມຢູ່ເຂດເປົ້າໝາຍ ແມ່ນໄດ້ເລີ່ມຕົ້ນຂຶ້ນແລ້ວ. ແຕ່ລະກຸ່ມແມ່ນມີຈຸດປະສົງຕົ້ນຕໍໃນການປ່ຽນແປງນະໂຍບາຍ ແລະ ພາກປະຕິບັດທີ່ເປັນຮູບປະທຳ ອັນເປັນຜົນມາຈາກການສະໜັບສະໜູນດ້ານນະໂຍບາຍ.



*ກິດຈະກຳການປູກຝັງ ແລະ ລ້ຽງສັດຂະໜາດນ້ອຍຢູ່ແຂວງຊຽງຂວາງ.*
*ຮູບໂດຍ: © GIZ/ບາດ ເວີເວຈ໌*

ກິດຈະກຳເຫຼົ່ານັ້ນ ໄດ້ປະກອບສ່ວນເຂົ້າໃນ ການປ່ຽນແປງນະໂຍບາຍ ໃນພາບລວມຄືແນວໃດ.

ຜົນໄດ້ຮັບເບື້ອງຕົ້ນ ຂອງກຸ່ມທີ່ຮັບຜິດຊອບສາຍວຽກ ດ້ານການຮັບຮູ້ສິດຕາມປະເພນີ ກ່ຽວກັບການປັບປຸງທັງສອງດ້ານຄື ດ້ານນະໂຍບາຍ ແລະ ພາກປະຕິບັດ ແມ່ນພວມທົດລອງໃນຫຼາກຫຼາຍຮູບແບບທີ່ແຕກຕ່າງກັນ ຈາກວຽກງານຮັບປະກັນການຮັບຮູ້ສິດຕາມປະເພນີ ພ້ອມທັງເກັບກຳບົດຮຽນທີ່ຖອດຖອນໄດ້ຈາກການທົດລອງເຫຼົ່ານັ້ນ ເພື່ອນຳມາເປັນຂໍ້ສະເໜີແນະດ້ານນະໂຍບາຍ. ການທົດລອງກ່ຽວກັບການປັບປຸງພາກປະຕິບັດຈະເຮັດໃຫ້ມີຜູ້ໄດ້ຮັບຜົນປະໂຫຍດໂດຍກົງເປັນຈຳນວນຫຼາຍ ເຊິ່ງຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການແກ້ໄຂໃຫ້ດີຂຶ້ນ ໂດຍຜ່ານກິດຈະກຳປັບປຸງສິດກ່ຽວກັບທີ່ດິນ ແລະ ປ່າໄມ້ ໃຫ້ແກ່ຜູ້ຄອບຄອງທີ່ດິນຂະໜາດນ້ອຍຈຳນວນ 44,000 ຄົນ (ຊາຍ 22,500 ແລະ ຍິງ 21,500 ຄົນ, ໃນນັ້ນ 55% ແມ່ນຜູ້ໄດ້ຮັບຜົນປະໂຫຍດທີ່ນອນຢູ່ໃນກຸ່ມຊົນເຜົ່າສ່ວນນ້ອຍ).

ໂຄງການ MRLG ຈະສືບຕໍ່ເຮັດວຽກດ້ານການວິເຄາະນະໂຍບາຍ, ແນໃສ່ການພັດທະນາຍຸດທະສາດ ແລະ ການຄຸ້ມຄອງຄວາມຮູ້ເພື່ອບັນລຸບັນດາຜົນໄດ້ຮັບ. ຫຼັກການສ້າງຄຳແນະນຳດ້ານນະໂຍບາຍ ທີ່ອີງໃສ່ຫຼັກຖານສຳລັບຜູ້ຕັດສິນໃຈດ້ານນະໂຍບາຍ ແລະ ບົດຮຽນທີ່ຖອດຖອນໄດ້ຈະຖືກສັງລວມ ແລະ ເຜີຍແຜ່ໃຫ້ກຸ່ມເປົ້າໝາຍໃນຊ່ວງໄລຍະເວລາຂອງໂຄງການ.

## ບົດບາດຍິງ-ຊາຍ ແລະ ວຽກງານການຄຸ້ມຄອງທີ່ດິນ

ໂຄງການ MRLG ຮັບປະກັນວ່າບັນດາໂຄງການ ແລະ ກິດຈະກຳຕ່າງໆທີ່ໄດ້ຮັບທຶນສະໜັບສະໜູນແມ່ນເລັງໃສ່ກຸ່ມຜູ້ດ້ອຍໂອກາດເປັນສຳຄັນ. ອົງປະກອບທີ່ສຳຄັນ ໃນການຮັບປະກັນການຄອບຄອງທີ່ດິນ ສຳລັບກຸ່ມຊາວກະສິກອນຂະໜາດນ້ອຍ ແລະ ປະຊາຊົນບັນດາເຜົ່າໃນພາກພື້ນ ແມ່ນການຮັບປະກັນວ່າແມ່ຍິງມີສິດໃນທີ່ດິນທີ່ໝັ້ນຄົງ ແລະ ສະເໝີພາບ. ຈາກການຄົ້ນຄວ້າໄດ້ສະແດງໃຫ້ເຫັນ ເຖິງຄວາມສຳພັນອັນສຳຄັນ ລະຫວ່າງ ການປັບປຸງສິດໃນທີ່ດິນຂອງແມ່ຍິງ ແລະ ການຫຼຸດຜ່ອນຄວາມທຸກຍາກ. ແຕ່ເຖິງຢ່າງໃດກໍຕາມ, ແມ່ຍິງມັກຈະປະເຊີນກັບການຈຳແນກໃນລະບົບການຄອບຄອງທີ່ດິນ ທັງແບບດັ້ງເດີມ ແລະ ທາງການ. ເພື່ອເປັນການຕອບສະໜອງຕໍ່ສະພາບການດັ່ງກ່າວ, ບັນດາກິດຈະກຳສ່ວນໃຫຍ່ທີ່ໄດ້ທຶນສະໜັບສະໜູນ

### ກ່ຽວກັບ GIZ

ການບໍລິການຂອງ GIZ ແມ່ນອີງໃສ່ຄວາມຊ່ຽວຊານໃນລະດັບພາກພື້ນ ແລະ ຄວາມຊຳນານດ້ານວິຊາການ ພ້ອມທັງຄວາມຮູ້ດ້ານການຄຸ້ມຄອງບໍລິຫານ ທີ່ໄດ້ຜ່ານການທົດລອງ ແລະ ທົດສອບມາແລ້ວ. ໃນນາມເປັນວິສາຫະກິດຂອງລັດ, ພວກເຮົາຊ່ວຍ ລັດຖະບານເຢຍລະມັນ ໃຫ້ບັນລຸຈຸດປະສົງໃນຂົງເຂດ ການຮ່ວມມືສາກົນເພື່ອການພັດທະນາແບບຍືນຍົງ.


ຈັດພິມໂດຍ: Deutsche Gesellschaft für
Internationale Zusammenarbeit (GIZ) GmbH

ສຳນັກງານຂຶ້ນທະບຽນ ບອນ ແລະ ເອຈ໌ບອນ, ປະເທດເຢຍລະມັນ

ໂຄງການການປັບປຸງການຄຸ້ມຄອງທີ່ດິນໃນຂົງເຂດແມ່ນ້ຳຂອງ
(ILM-MR 2)

ເຮືອນ ເລກທີ 179, ໜ່ວຍ 15,
ບ້ານ ສີຖານເໜືອ, ເມືອງສີໂຄດຕະບອງ,
ນະຄອນຫຼວງວຽງຈັນ, ສປປ ລາວ
ໂທ: +856 21 316 570

www.giz.de/laos (EN); www.giz.de/laos-la (LA)

ລົງວັນທີ: ເມສາ 2021

ອອກແບບໂດຍ: ພະແນກປະຊາສຳພັນ ຫ້ອງການ GIZ ປະຈຳລາວ, ນະຄອນຫຼວງວຽງຈັນ

ຮູບຖ່າຍໂດຍ: GIZ/ບາດ ເວີເວຈ໌

ຂຽນໂດຍ: ປ.ອ. ໂທມັສ ທາຣາເຊັຟສກີ, ຄາສເຕັນ ຄຣອກເນີ

ບຸກຄົນຕິດຕໍ່: ປ.ອ. ໂທມັສ ທາຣາເຊັຟສກີ
(thomas.taraschewski@giz.de)

GIZ ຮັບຜິດຊອບຕໍ່ເນື້ອໃນສິ່ງພິມດັ່ງກ່າວ

ໃນນາມຂອງ: ກະຊວງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ (BMZ)